**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ
ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ

ເລກທີ 0301 /ວກປຈ
ນະຄອນປາກເຊ, ວັນທີ 04 MAR 2025

# ຫນັງສືແຈ້ງເຊີນປະມູນ

- ອີງຕາມ ແຈ້ງການຂອງກະຊວງແຜນການ ແລະ ການລົງທຶນ ແຜນງົບປະມານການລົງທຶນຂອງລັດ ໂຄງການຟື້ນຟູ-ສ້ອມແປງ ປະຈຳປີ 2025 ສະບັບເລກທີ 3368/ກຜທ.ກຜ4, ລົງວັນທີ 26 ທັນວາ 2024.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການມອບ ໂຄງການ ຟື້ນຟູ-ສ້ອມແປງສະໂມສອນ ໃຫ້ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ສະບັບເລກທີ 0814/ກປ, ລົງວັນທີ 06 ກຸມພາ 2025;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 1047/ກປ, ລົງວັນທີ 24 ກຸມພາ 2025 ວ່າດ້ວຍ: ການແຕ່ງຕັ້ງຄະນະຮັບຜິດຊອບດຳເນີນການປະມູນຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ໂຄງການຟື້ນຟູ-ສ້ອມແປງ ສະໂມສອນ ຂອງວິທະຍາໄລກະສິກຳ ແລະ ປ່າໄມ້ຈຳປາສັກ;

1. ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເຫມາະສົມເຂົ້າຍື່ນຊອງປະມູນ ສຳລັບການກໍ່ສ້າງ ໂຄງການຟື້ນຟູ-ສ້ອມແປງ ສະໂມສອນ ຂອງວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ. ກຳນົດໄລຍະເວລາການກໍ່ສ້າງ 17 ເດືອນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ປະເພດ ຊັ້ນ 1 ຖືກຕ້ອງຕາມກົດຫມາຍ ທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ;
4. ບໍລິສັດທີ່ມີຄຸນນະວຸທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ; ສອບຖາມຂໍ້ມູນ ແລະ ລົງກວດກາສະໜາມຕົວຈິງໄດ້ໂດຍພົວພັນຫາ ທ່ານ ບຸນໂຮມ ໄຊສົງຄາມ ຫົວໜ້າຫ້ອງການບໍລິຫານ ແລະ ແຜນການ, ເບີໂທລະສັບ 0302813745, 020 5536 0445 ແລະ ຊື້ເອກະສານ-ປະມູນ ໄດ້ຕາມສະຖານທີ່ຂ້າງລຸ່ມນີ້ (ໃນໂມງລັດຖະການ) ນັບແຕ່ມື້ແຈ້ງການເປັນຕົ້ນໄປ.



ສະແກນດ້ວຍ CamScanner

5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນ ຕ້ອງຍື່ນໜັງສືສະເໜີຫາ ຫ້ອງການບໍລິຫານ ແລະ ແຜນການ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ (ໃນໂມງລັດຖະການ), ເລີ່ມແຕ່ 06 ມີນາ 2025 ເປັນຕົ້ນໄປ, ໃນລາຄາ 4,000,000 ກີບຕໍ່ຊອງ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.

6. ຊອງປະມູນຕ້ອງສົ່ງ, ໃນເວລາ ຫລື ກ່ອນເວລາ 10:00 ໂມງ, ວັນທີ 10 ເມສາ 2025 ທີ່ ຫ້ອງປະຊຸມ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 10:30 ໂມງ, ວັນທີ 10 ເມສາ 2025 ທີ່ ຫ້ອງປະຊຸມ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ຂ້າງລຸ່ມນີ້.

7. ທຸກໆ ຊອງປະມູນຕ້ອງໄດ້ ມີໜັງສືຄ້ຳປະກັນການປະມູນອອກໂດຍທະນາຄານ ຊຶ່ງມູນຄ່າການຄ້ຳປະກັນ ບໍ່ໃຫ້ຫລຸດ 2 % ຂອງລາຄາສະເໜີເຂົ້າປະມູນ.

8. ທີ່ຢູ່: ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ຕັ້ງຢູ່ບ້ານກາງ, ນະຄອນປາກເຊ, ແຂວງຈຳປາສັກ.
   - **ສະຖານທີ່ຊື້ເອກະສານປະມູນ:**
     1) ຫ້ອງການບໍລິຫານ ແລະ ແຜນການ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ຕັ້ງຢູ່ບ້ານກາງ, ນະຄອນປາກເຊ, ແຂວງຈຳປາສັກ, ທ່ານ ບຸນໂຮມ ໄຊສິງຄາມ ເບີໂທລະສັບ 020 5536 0445.
     2) ກົມແຜນການ ແລະ ການຮ່ວມມື ກະຊວງກະສິກຳ ແລະ ປ່າໄມ້ ຕັ້ງຢູ່ ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ທ່ານ ພອນໄຊ ແກ້ວປະເສີດ ເບີໂທລະສັບ: 020 5445 6366.
   - **ສະຖານທີ່ສົ່ງຊອງ ແລະ ບ່ອນເປີດຊອງປະມູນ:**
     1) ຫ້ອງປະຊຸມ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ຕັ້ງຢູ່ບ້ານກາງ, ນະຄອນປາກເຊ, ແຂວງຈຳປາສັກ.

**ອຳນວຍການວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ**
**ຫົວໜ້າຄະນະຮັບຜິດຊອບດຳເນີນການປະມູນຈັດຊື້-ຈັດຈ້າງ**

ກະຊວງກະສິກຳ ແລະ ປ່າໄມ້ ວິທະຍາໄລ ກະສິກຳ ແລະ ປ່າໄມ້ ຈຳປາສັກ ແຂວງຈຳປາສັກ

**ຄຳສະຫວ່າງ ສີມບຸນຂັນ**



ສະແກນດ້ວຍ CamScanner